## Scriptures Reading for Sunday August 24, 2008

First Reading: Isaiah 51:1-6
Psalm: Psalm 138
Second Reading: Romans 12:1-8
Gospel: Matthew 16:13-20

English click:
http://bible.oremus.org/?ql=86063985

Isaiah 51:1-6

**51 ຄຳເລົ້າໂລມມາເຖິງຊີໂອນ**

**Blessings in Store for God's People**

**(ປຖກ 12:1-3)**

1 “ຈົ່ງຟັງເຮົາ ເຈົ້າທັງຫລາຍຜູ້ຊິນຂວາຍຫາການຊ່ອຍກູ້ ເຈົ້າຜູ້ສແວງພຣະຜູ້ເປັນເຈົ້າ ຈົ່ງມອງເບິ່ງຫີນ
ຊຶ່ງໄດ້ສະກັດຕົວເຈົ້າມາ ແລະຈົ່ງມອງເບິ່ງບໍ່ຫີນຊຶ່ງຊົງຂຸດເອົາຕົວເຈົ້າທັງຫລາຍມາ
2 ຈົ່ງເບິ່ງອັບຣາຮາມບັນພະບຸຣຸດຂອງເຈົ້າທັງຫລາຍ ແລະເບິ່ງນາງຊາຣາຜູ້ຄອດເຈົ້າ ເພາະເມື່ອມີເຂົາ
ຢູ່ແຕ່ຜູ້ດຽວ ເຮົາໄດ້ຮ້ອງເອີ້ນເຂົາ ແລະເຮົາອວຍພອນເຂົາແລະກະທຳໃຫ້ເປັນຄົນຫລວງຫລາຍ
3 ເພາະວ່າພຣະຜູ້ເປັນເຈົ້າຊົງເລົ້າໂລມຊີໂອນ ພຣະອົງຈະຊົງເລົ້າໂລມບ່ອນທີ່ຮົກຮ້າງທັງສິ້ນຂອງນາງ
ແລະຈະທຳຖິ່ນກັນດານຂອງນາງເຫມືອນສວນເອເດນ ແລະທະເລຊາຍຂອງນາງເຫມືອນ
ອຸທຍານຂອງພຣະຜູ້ເປັນເຈົ້າ ຈະພົບຄວາມຊື່ນບານແລະຄວາມຍິນດີໃນນາງ ທັງການໂມທະນາແລະ
ສຽງເພງ
4 ຊົນຊາດຂອງເຮົາເອີຍ ຈົ່ງຟັງສຽງຂອງເຮົາ ຊາດຂອງເຮົາເອີຍ ຈົ່ງງ່ຽງຫູຟັງເຮົາ ເພາະພຣະທັມຈະ
ອອກໄປຈາກເຮົາ ແລະຄວາມຍຸດຕິທັມຈະອອກໄປເປັນຄວາມສວ່າງຂອງຊົນຊາດທັງຫລາຍ
5 ການຊ່ອຍກູ້ຂອງເຮົາໃກ້ເຂົ້າມາໂດຍໄວ ແລະຄວາມລອດຂອງເຮົາໄດ້ອອກໄປແລ້ວ ແຂນຂອງເຮົາຈະ
ປົກຄອງຊົນຊາດທັງຫລາຍ ແຜ່ນດິນຊາຍທະເລລໍຄອຍເຮົາ ແລະເຂົາຫວັງຄອຍກຳລັງແຂນຂອງເຮົາ
6 ຈົ່ງແຫງນຕາເບິ່ງຟ້າສວັນ ແລະມອງເບິ່ງໂລກເບື້ອງລຸ່ມ ເພາະວ່າຟ້າສວັນຈະສູນສິ້ນໄປເຫມືອນຄວັນ
ແລະແຜ່ນດິນໂລກຈະສລາຍໄປເຫມືອນຢ່າງເສື້ອຜ້າ ແລະເຂົາທັງຫລາຍຜູ້ອາໄສຢູ່ໃນນັ້ນຈະຕາຍໄປ
ເຫມືອນຮິ້ນ ແຕ່ຄວາມລອດຂອງເຮົາຈະຢູ່ເປັນນິດ ແລະການຊ່ອຍກູ້ຂອງເຮົາຈະບໍ່ສິ້ນສຸດເລີຍ

Psalm 138

**138. ເພງສັຣເສີນ ບົດທີ່ນຶ່ງຮ້ອຍສາມສິບແປດ**

**ໂມທະນາເພາະພຣະເຈົ້າຊົງໂຜດເມດຕາ Thanksgiving and Praise**

ຂອງດາວິດ

Of David.

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຈະຖວາຍ
ໂມທະນາຂອບພຣະຄຸນພຣະອົງດ້ວຍສິ້ນສຸດໃຈຂອງຂ້າພຣະອົງ ຂ້າພຣະອົງຈະຮ້ອງເພງສັຣເສີນ
ຖວາຍພຣະອົງຕໍ່ຫນ້າບັນດາພຣະ

2 ຂ້າພຣະອົງກາບລົງຕົງມາຍັງພຣະວິຫານສັກສິດຂອງພຣະອົງ ແລະຖວາຍໂມທະນາພຣະຄຸນແກ່
ພຣະນາມຂອງພຣະອົງ ເພາະຄວາມຮັກຫມັ້ນຄົງແລະຄວາມສັຕສຸດຈະຣິດຂອງພຣະອົງ ເພາະ
ພຣະອົງຊົງເຊີດຊູພຣະນາມ ແລະພຣະວັຈນະຂອງພຣະອົງເຫນືອສາຣະພັດ
3 ໃນວັນທີ່ຂ້າພຣະອົງຮ້ອງທູນ ພຣະອົງໄດ້ຊົງຕອບຂ້າພຣະອົງ ພຣະອົງຊົງເພີ້ມກຳລັງຈິດໃຈຂອງຂ້າພ
ຣະອົງ
4 ຂ້າແດ່ພຣະຜູ້ເປັນເຈົ້າ ບັນດາກະສັດແຫ່ງແຜ່ນ
ດິນໂລກຈະສັຣເສີນພຣະອົງ ເພາະທ່ານເຫລົ່ານັ້ນໄດ້ຍິນພຣະວັຈນະແຫ່ງພຣະໂອດຂອງພຣະອົງ
5 ແລະທ່ານເຫລົ່ານັ້ນຈະຮ້ອງເພງເຖິງທາງຂອງ
ພຣະຜູ້ເປັນເຈົ້າ ເພາະຣັສມີຂອງພຣະຜູ້ເປັນເຈົ້ານັ້ນໃຫຍ່ຫລວງ
6 ເຖິງແມ່ນວ່າພຣະຜູ້ເປັນເຈົ້ານັ້ນສູງຍິ່ງ ພຣະອົງກໍຊົງເຫັນແກ່ຄົນຕ່ຳຕ້ອຍ ແຕ່ພຣະອົງຊົງຮູ້ຈັກຄົນ
ຈອງຫອງໄດ້ແຕ່ໄກ
7 ແມ້ຂ້າພຣະອົງເດີນຢູ່ກາງຄວາມຍາກລຳບາກ
ພຣະອົງຊົງສງວນຊີວິດຂອງຂ້າພຣະອົງໄວ້ ພຣະອົງຊົງຢຽດພຣະຫັດຂອງພຣະອົງອອກຕໍ່ຕ້ານ
ຄວາມພິໂຣດຂອງສັດຕຣູຂອງຂ້າພຣະອົງ ແລະ
ພຣະຫັດຂວາຂອງພຣະອົງກໍຊ່ອຍກູ້ຂ້າພຣະອົງ
8 ພຣະຜູ້ເປັນເຈົ້າຊົງໃຫ້ສຳເຣັດພຣະປະສົງຂອງ
ພຣະອົງແກ່ຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ ຂໍຢ່າ
ຊົງປະຖິ້ມພຣະຫັຖກິດຂອງພຣະອົງ

Romans 12:1-8

**12 ດຳເນີນຊີວິດຕາມແບບການປະຕິບັດພຣະເຈົ້າ**

**The New Life in Christ**

1 ເຫດສັນນັ້ນພີ່ນ້ອງທັງຫລາຍເອີຍ, ໂດຍເຫັນແກ່ພຣະເມດຕາກະຣຸນາຂອງພຣະເຈົ້າ ເຮົາຈຶ່ງຊັກຊວນ
ພວກເຈົ້າໃຫ້ຖວາຍຕົວແກ່ພຣະອົງ ເພື່ອເປັນເຄື່ອງບູຊາທີ່ມີຊີວິດ, ເປັນອັນບໍຣິສຸດ, ແລະເປັນທີ່ຊອບພ
ຣະທັຍພຣະເຈົ້າ ຊຶ່ງເປັນການນະ
ມັສການທີ່ສົມກັບຝ່າຍວິນຍານຂອງເຈົ້າທັງຫລາຍ
2 ຢ່າດຳເນີນຊີວິດເຫມືອນຢ່າງຊາວໂລກນີ້ ແຕ່ຈົ່ງຮັບການຊົງປ່ຽນແປງຈິດໃຈ ແລ້ວອຸປນິສັຍຂອງ
ພວກເຈົ້າຈຶ່ງຈະປ່ຽນໃຫມ່ ເພື່ອເຈົ້າທັງຫລາຍຈະໄດ້ຮູ້ນ້ຳພຣະທັຍຂອງພຣະເຈົ້າ ຈະໄດ້ຮູ້ວ່າອັນໃດດີ
ອັນໃດເປັນທີ່ຊອບພຣະທັຍ ແລະອັນໃດດີທີ່ສຸດ
3 ເຮົາກ່າວແກ່ເຈົ້າທັງຫລາຍທຸກຄົນໂດຍພຣະຄຸນທີ່ຊົງປະທານແກ່ເຮົາແລ້ວວ່າ ຢ່າຄິດຖືຕົວເກີນທີ່ຕົນ
ຄວນຈະຄິດນັ້ນ ແຕ່ຈົ່ງຄິດໃຫ້ພໍສົມກັບຂະ
ຫນາດແຫ່ງຄວາມເຊື່ອທີ່ພຣະເຈົ້າໄດ້ຊົງໂຜດປະທານໃຫ້ແກ່ທຸກຄົນ

4 ເພາະວ່າໃນຮ່າງກາຍອັນດຽວນັ້ນເຮົາມີອະວັຍວະຫລາຍຢ່າງ ແລະອະວັຍວະເຫລົ່ານັ້ນບໍ່ມີຫນ້າທີ່
ຢ່າງດຽວກັນສັນໃດ
5 ພວກເຮົາຜູ້ເປັນຫລາຍຄົນກໍຍັງເປັນຮ່າງກາຍ
ອັນດຽວໃນພຣະຄຣິດ ແລະເປັນອະວັຍວະແກ່ກັນແລະກັນສັນນັ້ນ
6 ແລະເຮົາທຸກຄົນໄດ້ຮັບຂອງພຣະຣາຊທານຕ່າງໆກັນ ຕາມພຣະຄຸນທີ່ໄດ້ຊົງໂຜດປະທານແກ່ພວກເຮົາ
ຄືຖ້າເປັນການປະກາດພຣະທັມ ກໍຈົ່ງປະກາດຕາມຂະຫນາດແຫ່ງຄວາມເຊື່ອ
7 ຖ້າເປັນການປະຕິບັດກໍຈົ່ງປະຕິບັດ ຖ້າເປັນການສັ່ງສອນກໍຈົ່ງສັ່ງສອນ
8 ຖ້າເປັນການເຕືອນສະຕິກໍຈົ່ງເຕືອນສະຕິ ຖ້າເປັນການບໍຣິຈາກກໍຈົ່ງບໍຣິຈາກດ້ວຍບໃຈກວ້າງຂວາງ
ຜູ້ຄຸ້ມຄອງກໍຈົ່ງຄຸ້ມຄອງດ້ວຍເອົາໃຈໃສ່
ຜູ້ທີ່ສະແດງຄວາມເມດຕາກໍຈົ່ງສະແດງດ້ວຍໃຈຍິນດີ

## Matthew 16:13-20

**ເປໂຕຍອມຮັບວ່າພຣະເຢຊູຊົງເປັນພຣະຄຣິດ**

**Peter's Declaration about Jesus**

**(ມຣກ 8:27-30; ລກ 9:18-21)**

13. ຄັນພຣະເຢຊູສະເດັດເຂົ້າໄປໃນເຂດເມືອງກາຍຊາເຣັຽຟີລິບປອຍ ພຣະອົງຊົງຖາມພວກສາວົກຂອງ
ຕົນວ່າ, "ຄົນທັງຫລາຍເວົ້າກັນວ່າບຸດມະນຸດແມ່ນຜູ້ໃດ"
14. ເຂົາທູນຕອບວ່າ, "ຜູ້ລາງຄົນວ່າເປັນໂຢຮັນບັບຕິສະໂຕ ແລະຄົນອື່ນວ່າເປັນເອລີຢາ ແຕ່ຄົນອື່ນອີກວ່າ
ເປັນເຢເຣມີຢາ ຫລືເປັນຄົນນຶ່ງໃນພວກຜູ້ປະກາດພຣະທັມ"
15. ພຣະອົງຊົງຖາມເຂົາວ່າ, "ແລ້ວຝ່າຍພວກທ່ານເດ, ວ່າເຮົາເປັນໃຜ"
16. ຊີໂມນເປໂຕທູນຕອບວ່າ, "ທ່ານເປັນພຣະຄຣິດ ພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່"
17. ພຣະເຢຊູຊົງກ່າວກັບເປໂຕວ່າ, "ຊີໂມນ ລູກໂຢນາເອີຍ, ທ່ານກໍເປັນສຸກ ເພາະວ່າບໍ່ແມ່ນມະນຸດທີ່ໄດ້
ສະແດງຄຳນີ້ແກ່ທ່ານ ແຕ່ແມ່ນພຣະບິດາຂອງເຮົາຜູ້ຊົງສະຖິດໃນສວັນຊົງໃຫ້ຊາບ
18. ຝ່າຍເຮົາ, ເຮົາບອກທ່ານວ່າທ່ານຄືເປໂຕ ເທິງສີລາກ້ອນນີ້ ເຮົາຈະສ້າງຄຣິສຕະຈັກຂອງເຮົາຂຶ້ນ
ແລະປະຕູແຫ່ງແດນມໍຣະນາຈະມີຊັຍຕໍ່ຄຣິສຕະຈັກນັ້ນບໍ່ໄດ້
19. ເຮົາຈະມອບຂໍກະແຈແຫ່ງແຜ່ນດິນສວັນໄວ້ໃຫ້ທ່ານ ທ່ານຈະຜູກມັດສິ່ງໃດໄວ້ໃນໂລກ ສິ່ງນັ້ນກໍຈະ
ຊົງຜູກມັດໄວ້ແລ້ວໃນສວັນ ທ່ານຈະແກ້ສິ່ງໃດໃນໂລກ ສິ່ງນັ້ນກໍຈະຊົງແກ້ໃຫ້ຫລຸດແລ້ວໃນສວັນ"
20. ແລ້ວພຣະອົງຊົງຫ້າມສາວົກ ບໍ່ໃຫ້ບອກຜູ້ໃດວ່າຕົນຊົງເປັນພຣະຄຣິດ